# ຫຼັກສູດ ສຳລັບອົບຮົມ ອາສາສະໝັກ ໄວໜຸ່ມ "ເພືອນຊ່ວຍເພື່ອນ"

ສະມາຄົມສົ່ງເສີມສຸຂະພາບຄອບຄົວ, 2016

# ບົດທີ 6 (20 ນາທີ)

# ສິດທິທາງເພດ ແລະ ການຈະເລີນພັນ ຂອງໄວລຸ້ນ

# ໄວລຸ້ນ ທຸກຄົນ ມີສິດ:

- ມີສິດ ໃນການສະແຫວງຫາຂໍ້ມູນຂ່າວສານ ແລະ ການຮຽນຮູ້ ດ້ານສຸຂະພາບທາງເພດ ແລະ ການຈະເລີນພັນ ທີ່ຖືກຕ້ອງ ຊັດເຈນ ດ້ວຍທຸກຊ່ອງທາງ
- ມີສິດໃນການເຂົ້າເຖິງການບໍລິການສຸຂະພາບທາງເພດ ແລະ ການຈະເລີນພັນ ທີ່ມີຄຸນນະພາບ ແບບເປັນມິດ ແລະ ເປັນສ່ວນຕົວໂດຍບໍ່ມີການຈຳແນກລັງກຽດ
- ມີສິດຢ່າງເປັນອິດສະລະ ໃນການກຳນົດ ວິຖີທາງເພດຂອງຕົນເອງ ດ້ວຍຄວາມມັກ, ຄວາມພໍໃຈ, ຄວາມສາມາດ, ຄວາມຮັບຜິດຊອບ ຕໍ່ກິດຈະກຳທາງເພດຂອງຕົນເອງ
- ມີສິດ ຕັດສິນໃຈເລືອກຄູ່ຮ່ວມເພດຂອງຕົນ ໂດຍປາດສະຈາກການບັງຄັບ, ຂົ່ມຂູ່ , ທາລຸນ, ເຮັດໃຫ້ອັບອາຍ ຫຼື ດ້ວຍການລົງໂທດ
- ມີສິດ ໃນການຕັດສິນໃຈ ກ່ຽວກັບແຕ່ງງານ (ກັບຄົນທີ່ຕົນຮັກ ແລະ ເຂົາກໍຮັກຕົນ)

# ໄວລຸ້ນ ທຸກຄົນ ມີສິດ: (ຕໍ່)

- ມີສິດ ໃນການກຳນົດ ການຖືພາ ແລະ ມີລູກ 7ຈຳນວນຄັ້ງ ແລະ ໄລຍະຫ່າງ)
- ມີສິດ ສະແດງອອກຢ່າງອິດສະລະ ດ້ານຄວາມຄິດເຫັນ ແລະ ການສະແດງອອກ ຕໍ່ກິດຈະກຳທາງເພດ ທີ່ເທົ່າທຽມກັນ ແລະ ບໍ່ຖືກຈຳແນກ
- ມີສິດໄດ້ຮັບການປຽວຢາ ກໍລະນີ ຖືກການກະທຳຮຸນແຮງ ລວມມີການລ່ວງລະເມີດທາງເພດ

ຢາກໄດ້ສິດທີ່ນັ້ນ ໄວໜຸ່ມຕ້ອງ:

⇨ ເຄົາລົບນັບຖືສິດຂອງຜູ້ອື່ນ

⇨ ໄດ້ຮັບການປົກປ້ອງ

⇨ ກຳນົດໃນກົດໝາຍ ບົນພື້ນຖານສິດທິມະນຸດ

# ອຸປະສັກໃນການເຂົ້າເຖິງບໍລິການ ທາງເພດ-ການຈະເລີນພັນຂອງໄວໜຸ່ມ

- ຫຼັກສູດເພດສຶກສາ ຍັງມີຢ່າງຈຳກັດໃນໂຮງຮຽນ ແລະ ບໍ່ຄົບຖ້ວນ
- ສະຖານທີ່ການບໍລິການທີ່ເປັນມິດແກ່ໄວໜຸ່ມ ຍັງມີຈຳກັດ
- ການເຂົ້າເຖິງສະຖານທີ່ບໍລິການ (ຄູມກຳເນີດ, ພຕພ, ...) ຍັງຍາກ
- ການບໍລິການແກ່ໄວໜຸ່ມ (ວິທີຄຸມກຳເນີດ, ຢາ ພຕພ) ບາງຢ່າງ ຕ້ອງໄດ້ເສຍຄ່າ
- ທາງເລືອກ ສຳລັບວິທີຄຸມກຳເນີດ ຍັງມີຈຳກັດ (ໜ້ອຍວິທີ)
- ຄວາມຢ້ານ ຕໍ່ຂ່າວລື/ຜົນຂ້າງຄຽງ ວິທີຄູມກຳເນີດ, ການປິ່ນປົວ ພຕພ
- ດ້ານບົດບາດຍິງ-ຊາຍ
- ດ້ານວັດທະນະທຳ-ສັງຄົມ (ຈຳແນກ, ດູຖູກ, ລັງກຽດ)